ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS
ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍຊາວໜຸ່ມ ທຫລ.ຊຂ ສ້າງຂະບວນການອອກແຮງງານອະນາໄມ




ໃນຕອນເຊົ້າຂອງ ວັນທີ **12** ມິຖຸນາ **2020** ໜ່ວຍຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງ ຊຽງຂວາງ ໄດ້ສ້າງຂະບວນການອອກແຮງງານອະນາໄມສວນສາທາລະນະອ່າງນ້ຳຫງ່ຳ ແລະ ສຳນັກງານຫ້ອງການ ເປັນກຽດນຳພາຂະບວນການໂດຍ ສະຫາຍ ສົມສັກ ທຳມະວົງ ເລຂາໜ່ວຍຊາວໜຸ່ມ ທຫລ.ຊຂ ແລະ ໃຫ້ກຽດເຂົ້າຮ່ວມຂະບວນການຂອງ ສະຫາຍ ນາງ ໜອມ ຫຼວງວິໄລ ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ ໜ່ວຍພັກ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ຄັ້ງທີ **I** ເຊິ່ງມີສະມາຊິກຊາວໜຸ່ມໜ່ວຍ ທຫລ.ຊຂ ເຂົ້າຮ່ວມ ຈຳນວນ **35** ສະຫາຍ.

ການສ້າງຂະບວນການອອກແຮງງານໃນຄັ້ງນີ້ ໜ່ວຍຊາວໜຸ່ມ ທຫລ.ຊຂ ໄດ້ມີການອະນາໄມອ້ອມອ່າງນ້ຳຫງ່ຳ, ສຳນັກງານຫ້ອງການ ແລະ ຫໍພັກພະນັກງານທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ດ້ວຍການເກັບຂີ້ເຫຍື້ອ, ຖາງປ່າ ແລະ ຕັດຫຍ້າ ໃນເຂດທີ່ຮົກເຮື້ອ. ສະມາຊິກຊາວໜຸ່ມແຕ່ລະສະຫາຍ ໄດ້ພ້ອມກັນເອົາໃຈໃສ່ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ມີຄວາມຮັບຜິດຊອບສູງ ໃນການອະນາໄມຕາມແຕ່ລະເຂດໃຫ້ມີຄວາມສະອາດງາມຕາ.







ຫຼັງຈາກນັ້ນ, ຄະນະຮັບຜິດຊອບຈາກໜ່ວຍຊາວໜຸ່ມ ທຫລ.ຊຂ ໄດ້ລົງກວດກາຂະບວນການອະນາໄມດັ່ງກ່າວ ເພື່ອການເກັບມ້ຽນຂີ້ເຫຍື້ອຕາມຈຸດອະນາໄມຕ່າງໆ ໄປຖິ້ມບ່ອນທີ່ກຳນົດໄວ້ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ ແລະ ຈົບງາມ.

**✍ ພາບ + ຂ່າວ : ສຸກສະຫວັນ ພົມມະວົງ**